ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

======ooo======

ສຳນັກງານນາຍົກລັດຖະມົນຕີ

ອົງການຄຸ້ມຄອງທີ່ດິນແຫ່ງຊາດ ເລກທີ 3204 /ສນຍ.ອຄດຊ

ນະຄອນຫລວງວຽງຈັນ, ວັນທີ 9/12/2008

# ຄຳແນະນຳ

# ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງຄຸ້ມຄອງທີ່ດິນ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ສະບັບເລກທີ 67/ນຍ, ລົງວັນທີ 18 ພຶດສະພາ 2004 ;
- ອີງຕາມພາກທີ II ໝວດທີ XVI, ພາກທີ III ໝວດທີ XVI ແລະ ພາກທີ IV ມາດຕາ 98 ຂອງລັດຖະບັນຍັດປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ;
- ອີງຕາມມາດຕາ 14 ຂອງດຳລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 88/ນຍ, ລົງວັນທີ 03 ມິຖຸນາ 2008.

ເພື່ອຮັບປະກັນການເກັບຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງຄຸ້ມຄອງທີ່ດິນ ໃຫ້ໄດ້ຢ່າງມີປະສິດທິພາບ ແລະ ຖືກຕ້ອງຕາມຄວາມເປັນຈິງໂດຍສອດຄ່ອງກັບລະບຽບກົດໝາຍ

**ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ,**
**ຫົວໜ້າອົງການຄຸ້ມຄອງທີ່ດິນແຫ່ງຊາດ ອອກຄຳແນະນຳ :**

## 1. ການເກັບຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງຄຸ້ມຄອງທີ່ດິນໃຫ້ປະຕິບັດດັ່ງນີ້ :

1.1. ຄ່າທຳນຽມຂອງຂະແໜງຄຸ້ມຄອງທີ່ດິນ ປະກອບດ້ວຍ :

- ຄ່າທຳນຽມຂຶ້ນທະບຽນ ແລະ ຈົດທະບຽນທີ່ດິນ,
- ຄ່າທຳນຽມການຈົດທະບຽນນິຕິກຳກ່ຽວກັບທີ່ດິນ;

- ຄ່າທຳນຽມການອອກໃບອະນຸຍາດໃຫ້ເຊົ່າ ຫຼື ສຳປະທານທີ່ດິນ;
- ຄ່າທຳນຽມການຫັນປ່ຽນທີ່ດິນຈາກປະເພດໜຶ່ງໄປສູ່ອີກປະເພດໜຶ່ງ.

1.2. ຄ່າບໍລິການຂອງຂະແໜງຄຸ້ມຄອງທີ່ດິນ ປະກອບດ້ວຍ :

- ຄ່າບໍລິການວັດແທກທີ່ດິນປຸກສ້າງ ແລະ ທີ່ດິນກະສິກຳ ;
- ຄ່າບໍລິການອອກໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນ ເພື່ອໄປຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍ ຂອງນິຕິກຳຈາກສຳນັກງານທະບຽນສານ.

## 2. ອັດຕາຄ່າທຳນຽມຂອງຂະແໜງຄຸ້ມຄອງທີ່ດິນ.

2.1. ອີງຕາມມາດຕາ 50 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ຄ່າທຳນຽມຂຶ້ນທະບຽນ ແລະ ຈົດທະບຽນທີ່ດິນ ປະກອບມີດັ່ງນີ້ :

- ຄ່າທຳນຽມຂຶ້ນທະບຽນທີ່ດິນ ກຳນົດເກັບດັ່ງນີ້ :

| ລ/ດ | ຄ່າທຳນຽມຂຶ້ນທະທຽນທີ່ດິນ | ອັດຕາແຕ່ລະຕອນດິນ ກີບ/ໃບຕາດິນ | |
|---|---|---|---|
| | | ເຂດເທດສະບານ ແລະເຂດຊານເມືອງ | ເຂດຊົນນະບົດ |
| 1. | ເປັນລະບົບ ຫຼື ຕາມການຮ້ອງຂໍ | 30.000 | 15.000 |

- ຄ່າທຳນຽມຈົດທະບຽນທີ່ດິນ ກຳນົດເກັບດັ່ງນີ້ :

| ລ/ດ | ເນື້ອໃນຂອງການຈົດທະບຽນທີ່ດິນ | ອັດຕາຄ່າທຳນຽມ |
|---|---|---|
| 1. | ການອອກໃບຕາດິນໃຫ້ຜູ້ສືບທອດມູນມໍຣະດົກ ແກ່ລູກ (ລູກຄີງ, ລູກລ້ຽງ, ລູກນ້າ) ແລະ ຜູ້ສືບທອດແທນທີ່ຕາມຍາດສາຍຕັ້ງຂອງຜູ້ເສັຍຊີວິດ | 0,1% ຂອງມູນຄ່າທີ່ດິນ ທີ່ມີການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ |
| 2. | ການອອກໃບຕາດິນໃຫ້ຜູ້ສືບທອດມູນມໍຣະດົກແກ່ຍາດສາຍຕັ້ງ ( ພໍ່ແມ່ ຫຼື ປູ່ຍາ, ພໍ່ເຖົ້າ, ແມ່ ເຖົ້າ ຫຼື ທວດ) ຂອງຜູ້ເສັຍຊີວິດ | 0,3% ຂອງມູນຄ່າທີ່ດິນ ທີ່ມີການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ |
| 3. | ການອອກໃບຕາດິນໃຫ້ຜູ້ສືບທອດມູນມໍຣະດົກແກ່ຍາດສາຍຂວາງ (ອ້າຍ, ເອື້ອຍ, ນ້ອງ ຫຼື ລຸງປ້າ, ອາວອາ,ນ້າບາວ,ນ້າສາວຫຼືຫຼານ)ຂອງຜູ້ເສັຍຊີວິດ | 0,5% ຂອງມູນຄ່າທີ່ດິນ ທີ່ມີການປະເມີນມູນຄ່າຕົວຈິງຂອງແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນ |

| | | |
|---|---|---|
| 4. | ການອອກໃບຕາດິນໃຫ້ແກ່ຜູ້ທີ່ໄດ້ຮັບການໂອນສິດນຳໃຊ້ທີ່ດິນຈາກເຈົ້າຂອງເດີມ ແລະ ຜູ້ສືບທອດມູນມໍຣະດົກຕາມພິໄນກຳທີ່ບໍ່ແມ່ນສາຍຍາດຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ເທິງນີ້ | 1% ຂອງມູນຄ່າທີ່ດິນ ທີ່ມີການປະເມີນມູນຄ່າຕົວຈິງແຕ່ລະເຂດ, ແຕ່ລະປະເພດທີ່ດິນ |

**ໝາຍເຫດ** : ອັດຕາ 0,1%, 0,3%, 0,5% ແລະ 1% ຂອງມູນຄ່າທີ່ດິນ ທີ່ມີການປະເມີນມູນຄ່າຕົວຈິງໃນແຕ່ລະເຂດ ແລະ ແຕ່ລະປະເພດທີ່ດິນທີ່ໄດ້ປະເມີນໄວ້ໃນແຕ່ລະໄລຍະແມ່ນໃຫ້ເກັບ 100% ຂອງອັດຕາດັ່ງກ່າວ. ພ້ອມດຽວກັນນັ້ນແມ່ນໃຫ້ຍົກເລີກອັດຕາ 35% ທີ່ເປັນບ່ອນອີງໃນການ ຄິດໄລ່ອັດຕາຄ່າທຳນຽມການຈົດທະບຽນໂອນສິດນຳໃຊ້ທີ່ດິນໃນໄລຍະຜ່ານມາ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງຂອງກະຊວງການເງິນ ສະບັບເລກທີ 1760/ ກງ, ລົງວັນທີ 25 ກັນຍາ 2003 ແລະ ຂໍ້ຕົກລົງຂອງອົງການການຄຸ້ມຄອງທີ່ດິນແຫ່ງຊາດ ສະບັບເລກທີ 611/ອຄ ດຊ, ລົງວັນທີ 16 ສິງຫາ 2007;

2.2. ອີງຕາມມາດຕາ 51 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ຄ່າທຳນຽມຈົດທະບຽນນິຕິກຳກ່ຽວກັບທີ່ດິນ ກຳນົດເກັບດັ່ງນີ້ :

| ລ/ດ | ເນື້ອໃນເອກະສານ | ອັດຕາຄ່າຈົດທະບຽນນິຕິກຳ ( ກີບ/ຄັ້ງ) |
|---|---|---|
| 1. | ການຈົດທະບຽນນິຕິກຳກ່ຽວກັບການເຄື່ອນໄຫວສິດນຳໃຊ້ທີ່ດິນທີ່ພົວພັນກັບສັນຍາຄ້ຳປະກັນການປະຕິບັດສັນຍາກູ້ຢືມ | 50.000 |
| 2 | ການຈົດທະບຽນນິຕິກຳກ່ຽວກັບການເຄື່ອນໄຫວສິດນຳໃຊ້ທີ່ດິນທີ່ພົວພັນກັບສັນຍາເຊົ່າທີ່ດິນ | 70.000 |

2.3. ອີງຕາມມາດຕາ 52 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ການອອກໃບອະນຸຍາດໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ກຳນົດເກັບອັດຕາດຽວ 50.000 ກີບ/ໃບ

2.4. ອີງຕາມມາດຕາ 53 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ຄ່າທຳນຽມການຫັນປ່ຽນທີ່ດິນຈາກປະເພດໜຶ່ງໄປສູ່ອີກປະເພດໜຶ່ງ ກຳນົດເກັບດັ່ງນີ້ :

| ລ/ດ | ເປົ້າໝາຍການຫັນປ່ຽນປະເພດທີ່ດິນ | ອັດຕາຄ່າທຳນຽມການຫັນປ່ຽນທີ່ດິນຕໍ່ຕາແມັດ/ກີບ | | |
|---|---|---|---|---|
| | | ເຂດຕົວເມືອງ | ເຂດຊານເມືອງ | ເຂດຊົນນະບົດ |
| 1. | ການຫັນປ່ຽນທີ່ດິນກະສິກຳມາເປັນທີ່ດິນປຸກສ້າງເພື່ອ ເປົ້າໝາຍທາງການຄ້າ | 30.000 | 20.000 | 15.000 |

| | | | | |
|---|---|---|---|---|
| 2 | ການຫັນປ່ຽນທີ່ດິນກະສິກຳມາເປັນທີ່ດິນປຸກສ້າງເພື່ອເປັນບ່ອນທີ່ຢູ່ອາໄສສຳລັບຄອບຄົວ (ຍົກເວັ້ນດິນນາ) | 300 | 200 | 100 |
| 3. | ການຫັນປ່ຽນທີ່ດິນປຸກສ້າງມາເປັນທີ່ດິນກະສິກຳ. | 8 | 5 | 3 |

ໝາຍເຫດ : ການຫັນປ່ຽນທີ່ດິນກະສິກຳມາເປັນທີ່ດິນປຸກສ້າງ ເພື່ອເປັນບ່ອນທີ່ຢູ່ອາໄສສຳລັບຄອບຄົວທີ່ໄດ້ຍົກເວັ້ນດິນນານັ້ນ ໝາຍຄວາມວ່າຖ້າເປັນດິນນາ ແມ່ນໃຫ້ເກັບຕາມອັດຕາຄ່າທຳນຽມທີ່ໄດ້ກຳນົດໄວ້ໃນຂໍ້ 1 ເທິງນີ້.

2.5. ອີງຕາມມາດຕາ 54 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ຄ່າທຳນຽມການຫັນປ່ຽນທີ່ດິນປ່າໄມ້ທຳມະຊາດໄປເປັນທີ່ດິນປະເພດອື່ນກຳນົດເກັບດັ່ງນີ້ :

| ລ/ດ | ເປົ້າໝາຍການຫັນປ່ຽນທີ່ດິນ | ອັດຕາຄ່າທຳນຽມ ຕໍ່ຕາແມັດ/ກີບ | | |
|---|---|---|---|---|
| | | ເຂດຕົວເມືອງ | ເຂດຊານເມືອງ | ເຂດຊົນນະບົດ |
| 1. | ການຫັນປ່ຽນທີ່ດິນປ່າໄມ້ທຳມະຊາດໄປເປັນທີ່ດິນ ປະເພດອື່ນ | 40.000 | 35.000 | 30.000 |

## 3. ຄ່າບໍລິການຂອງຂະແໜງຄຸ້ມຄອງທີ່ດິນ

3.1. ອີງຕາມມາດຕາ 78 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ຄ່າບໍລິການຂອງຂະແໜງຄຸ້ມຄອງທີ່ດິນ

- ຄ່າບໍລິການວັດແທກທີ່ດິນປຸກສ້າງ ກຳນົດເກັບດັ່ງນີ້ :

| ລ/ດ | ເຂດສຳຫຼວດ/ວັດແທກ | ອັດຕາຄ່າບໍລິການ ( ກີບ/ຕາແມັດ ) | | |
|---|---|---|---|---|
| | | ເຂດເທດສະບານ | ເຂດຊານເມືອງ | ເຂດຊົນນະບົດ |
| 1. | ເຂດທົ່ງພຽງ | 350 | 300 | 250 |
| 2. | ເຂດພູພຽງ | 300 | 250 | 200 |
| 3. | ເຂດພູດອຍ | 200 | 150 | 100 |

- ຄ່າບໍລິການວັດແທກທີ່ດິນກະສິກຳ ກຳນົດເກັບດັ່ງນີ້ :

| ລ/ດ | ເຂດສຳຫຼວດ/ວັດແທກ | ອັດຕາຄ່າບໍລິການ ( ກີບ/ເຮັກຕາ ) | | |
|---|---|---|---|---|
| | | ເຂດເທດສະບານ | ເຂດຊານເມືອງ | ເຂດຊົນນະບົດ |
| 1. | ເຂດທົ່ງພຽງ | 300.000 | 250.000 | 230.000 |

| | | | | |
|---|---|---|---|---|
| 2. | ເຂດພູພຽງ | 250.000 | 230.000 | 200.000 |
| 3. | ເຂດພູດອຍ | 200.000 | 180.000 | 150.000 |

- ຄ່າບໍລິການອອກໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນ ເພື່ອໄປຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍຂອງນິຕິກຳຈາກສຳນັກງານທະບຽນສານ ເກັບດັ່ງນີ້ :

| ລ/ດ | ເນື້ອໃນເອກະສານ | (ກີບ/ໃບ ) |
|---|---|---|
| 1. | ອອກໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນທີ່ດິນ ເພື່ອນຳໄປເປັນ ຫຼັກຊັບຄ້ຳປະກັນການປະຕິບັດສັນຍາກູ້ຢືມ | 20.000 |
| 2 | ອອກໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນທີ່ດິນ ເພື່ອບ່ອນອີງໃນການຊື້ - ຂາຍ ຫຼື ມອບໂອນ ແລະ ແລກປ່ຽນທີ່ດິນ | 50.000 |

## 4. ການຍົກເວັ້ນຄ່າທຳນຽມ ແລະ ຄ່າບໍລິການຂະແໜງຄຸ້ມຄອງທີ່ດິນ

ອີງຕາມມາດຕາ 98 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008

- ຍົກເວັ້ນການເກັບຄ່າທຳນຽມ ການຫັນປ່ຽນປະເພດທີ່ດິນອື່ນໆ ມາເພື່ອປູກໄມ້ຟື້ນຟູປ່າໄມ້ທຳມະຊາດ, ການອອກໃບຕາດິນຂອງລັດ ແລະ ທີ່ດິນລວມໝູ່;
- ຍົກເວັ້ນການເກັບຄ່າບໍລິການ ຄ່າວັດແທກທີ່ດິນ ເພື່ອອອກໃບຕາດິນ ຫຼື ອອກໃບແຜນທີ່ດິນຕາດິນນຳໃຊ້ຂອງລັດ ແລະ ທີ່ດິນລວມໝູ່ໃຫ້ອົງການຈັດຕັ້ງລັດ, ອົງການຈັດຕັ້ງການເມືອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງເສດຖະກິດຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ.

## 5. ມາດຕະການປັບໃໝ

5.1. ອີງຕາມມາດຕາ 102 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ການປັບໃໝຕໍ່ຜູ້ຄຸ້ມຄອງເກັບຄ່າທຳນຽມ ແລະ ຄ່າບໍລິການ.

ຂະແໜງການຂອງລັດແຕ່ລະຂັ້ນ ທີ່ມີໜ້າທີ່ເກັບຄ່າທຳນຽມ ແລະ ຄ່າບໍລິການ ຈາກບຸກຄົນ, ນິຕິບຸກຄົນ, ແລະ ອົງການຈັດຕັ້ງ ທີ່ລະເມີດການເກັບ, ການແຈ້ງ, ການລະມອບ ແລະ ການລາຍງານຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີລຸ່ມນີ້ :

1. <u>ກໍລະນີ:</u> ຊັກຊ້າໃນການຍື່ນແຈ້ງເສຍ ຫຼື ການເສຍຄ່າທຳນຽມ ແລະ ຄ່າບໍລິການຈະຖືກປັບໃໝ 5% ຂອງມູນຄ່າທີ່ເກັບໄດ້ໃນແຕ່ລະເດືອນ.
2. <u>ກໍລະນີ:</u> ຖືບັນຊີບໍ່ຖືກຕ້ອງ, ແຈ້ງເສຍບໍ່ຄົບຖ້ວນ, ເກັບເງິນບໍ່ຖືກຕ້ອງຕາມອັດຕາທີ່ກຳນົດໄວ້ ແລະ ບໍ່ອອກໃບຮັບເງິນທີ່ໄດ້ຮັບຢ່າງເປັນທາງການ ຕາມແບບພິມທີ່ກະຊວງການເງິນກຳນົດໄວ້,

ປອມແປງເອກະສານການບັນຊີອື່ນໆ, ບໍ່ຈົດເຂົ້າປຶ້ມ ແລະ ບໍ່ລາຍງານຢ່າງເປັນປົກກະຕິຈະຖືກປະຕິບັດມາດຕະການ 3 ຢ່າງ ດັ່ງນີ້ :

- ຕ້ອງເສຍຄືນໃຫ້ຄົບຖ້ວນພ້ອມທັງເສຍຄ່າປັບໃໝຊັກຊ້າ 5% ຕໍ່ເດືອນ;
- ຕ້ອງເສຍເພີ່ມສາມສິບສ່ວນຮ້ອຍ ( 30 % ) ຂອງມູນຄ່າໃຫ້ເສຍຄືນ;
- ຕ້ອງເສຍຄ່າປັບໃໝຕາມລະບຽບການບັນຊີແຫ່ງລັດ;

ກໍລະນີຫາກກະທຳຜິດອີກເປັນຄັ້ງທີ 2 ນອກຈາກຈະຕ້ອງເສຍຄືນໃຫ້ຄົບຖ້ວນແລ້ວຕ້ອງ :

- ເສຍເພີ່ມອີກຫົກສິບສ່ວນຮ້ອຍ ( 60 % ) ຂອງຈຳນວນທີ່ໃຫ້ເສຍຄືນ;
- ເສຍຄ່າປັບໃໝຕາມລະບຽບການບັນຊີແຫ່ງລັດ;
- ແຈ້ງການອອກທາງສື່ມວນຊົນ.

3. <u>ກໍລະນີ</u>: ເກັບນອກບັນຊີລາຍການທີ່ລັດຖະບັນຍັດກຳນົດໄວ້, ບໍ່ຍອມໃຫ້ເຈົ້າໜ້າທີ່ກວດກາ, ບໍ່ແຈ້ງເສຍ ແລະ ບໍ່ຍອມມອບເງິນທີ່ເກັບໄດ້ເຂົ້າຄັງເງິນແຫ່ງຊາດ ຈະຖືກປະຕິບັດຕາມມາດຕະການ 3 ຢ່າງ ດັ່ງນີ້:

- ຕ້ອງເສຍຕາມຕົວເລກແຜນການປະຈຳປີທີ່ມອບໃຫ້;
- ຕ້ອງເສຍເພີ່ມ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າແຜນການ;
- ຕ້ອງເສຍຄ່າປັບໃໝຕາມລະບຽບການບັນຊີແຫ່ງລັດ.

ກໍລະນີ ຫາກກະທຳຜິດເປັນຄັ້ງທີ 2 ນອກຈາກຈະຕ້ອງເສຍຕາມແຜນການແລ້ວຕ້ອງ:

- ເສຍຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າແຜນການ;
- ເສຍຄ່າປັບໃໝຕາມລະບຽບການບັນຊີແຫ່ງລັດ;
- ແຈ້ງການອອກທາງສື່ມວນຊົນ.

5.2. ອີງຕາມມາດຕາ 103 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ການປັບໃໝຕໍ່ຜູ້ລະເມີດບໍ່ເສຍຄ່າທຳນຽມ ແລະ ຄ່າບໍລິການ

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆທີ່ມີໜ້າທີ່ເສຍຄ່າທຳນຽມ ແລະ ຄ່າບໍລິການ ຫາກລະເມີດບໍ່ເສຍຄ່າທຳນຽມ, ຄ່າບໍລິການ ຫຼື ແຈ້ງເອກະສານຢັ້ງຢືນພ້ອມທັງຂໍ້ມູນພື້ນຖານການຄິດໄລ່ບໍ່ຖືກຕ້ອງ,ປອມແປງເອກະສານທີ່ຂະແໜງການຄຸ້ມຄອງຂອງລັດວາງອອກຈະຖືກປະຕິບັດຕາມມາດຕະການ ດັ່ງນີ້:

- ຄັ້ງທີ 1 ແນະນຳສຶກສາອົບຮົມ, ເສຍຄືນ ແລະ ປັບໃໝ 10% ຂອງມູນຄ່າທີ່ໃຫ້ເສຍຄືນ;
- ຄັ້ງທີ 2 ປັບໃໝ 30% ຂອງມູນຄ່າທີ່ໃຫ້ເສຍຄືນ;
- ຄັ້ງທີ 3 ປັບໃໝ 60% ຂອງມູນຄ່າທີ່ໃຫ້ເສຍຄືນ;
- ຄັ້ງທີ 4 ດຳເນີນຕາມຂັ້ນຕອນຂອງຂະບວນການຍຸຕິທຳ.

## 6. ມາດຕະການຈັດຕັ້ງປະຕິບັດ

6.1. ອີງຕາມມາດຕາ 104 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ຂໍ້ຫ້າມໃນການກຳນົດເກັບຄ່າທຳນຽມ ແລະ ຄ່າບໍລິການ.

ຫ້າມຂະແໜງການຂອງລັດ, ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ກຳນົດອັດຕາ ແລະ ເກັບຄ່າທຳນຽມ ແລະ ຄ່າບໍລິການວິຊາການ ນອກຈາກທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດສະບັບນີ້ຢ່າງເດັດຂາດ, ຖ້າຝ່າຝືນຈະຖືກລົງໂທດ ຕາມລະບຽບກົດໝາຍ.

6.2. ອີງຕາມມາດຕາ 105 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ການຄຸ້ມຄອງລາຍຮັບຄ່າທຳນຽມ ແລະ ຄ່າບໍລິການວິຊາການ.

ການຄຸ້ມຄອງລາຍຮັບຄ່າທຳນຽມ ແລະ ຄ່າບໍລິການວິຊາການປະຕິບັດ ດັ່ງນີ້:

ລາຍຮັບຈາກຄ່າທຳນຽມ, ຄ່າບໍລິການວິຊາການ ແລະ ຄ່າປັບໃໝ ທີ່ກຳນົດໄວ້ໃນລັດຖະບັນຍັດສະບັບນີ້ ລ້ວນແຕ່ຕ້ອງມອບເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ ແລະ ທັນຕາມກຳນົດເວລາໂດຍຜ່ານການໄລ່ລຽງ, ກວດກາ ແລະ ສັ່ງມອບຈາກລັດຖະການສ່ວຍສາອາກອນ.

ສຳລັບຄ່າທຳນຽມ ແມ່ນມອບເຂົ້າງົບປະມານຂອງລັດທັງໝົດ.

ສຳລັບລາຍຮັບຄ່າບໍລິການວິຊາການຕ້ອງຄິດໄລ່, ໄລ່ລຽງລາຍຮັບ ແລະ ລາຍຈ່າຍ, ສັງລວມເຂົ້າໃນແຜນງົບປະມານປະຈຳສົກປີຂອງອົງການກ່ຽວຂ້ອງປະຕິບັດຕາມລະບຽບການເງິນແຫ່ງລັດ ແລະ ພາຍໃຕ້ການຄຸ້ມຄອງ ຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຂະແໜງການເງິນ.

ສຳລັບຄ່າປັບໃໝຈາກການບໍ່ປະຕິບັດຕາມລັດຖະບັນຍັດສະບັບນີ້ ຕ້ອງມອບເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ.

ສຳລັບລາຍຮັບວິຊາການທີ່ເກັບເຂົ້າເປັນກອງທຶນຂອງລັດ ແມ່ນໃຫ້ປະຕິບັດຕາມລະບຽບສະເພາະຂອງກອງທຶນ.

ຄ່າທຳນຽມ, ຄ່າບໍລິການວິຊາການ ແລະ ຄ່າປັບໃໝ ທີ່ໄດ້ກຳນົດໄວ້ເປັນເງິນຕາຕ່າງປະເທດຢູ່ໃນລັດຖະບັນຍັດສະບັບນີ້ຕ້ອງມອບເຂົ້າງົບປະມານເປັນເງິນກີບ ຫຼື ເງິນຕາຕ່າງປະເທດກໍ່ໄດ້ ໂດຍຄິດໄລ່ຕາມອັດຕາແລກປ່ຽນຢູ່ທະນາຄານຂອງລັດວາງອອກໃນແຕ່ລະໄລຍະ. ສ່ວນຄ່າທຳນຽມ ແລະ ຄ່າບໍລິການວິຊາການທີ່ສະຖານທູດ ແລະ ກົງສູນລາວຢູ່ຕ່າງປະເທດ, ຄ່າທຳນຽມບິນຜ່ານນ່ານຟ້າຂອງ ສປປ ລາວ ແລະ ບາງປະເພດລາຍຮັບທີ່ລັດຖະບານໄດ້ກຳນົດໃຫ້ເກັບເປັນເງິນຕາຕ່າງປະເທດນັ້ນແມ່ນໃຫ້ເສຍເປັນເງິນຕາຕ່າງປະເທດ.

6.3. ອີງຕາມມາດຕາ 106 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ເງື່ອນໄຂນຳໃຊ້ລາຍຮັບຄ່າບໍລິການວິຊາການ

ລາຍຮັບຄ່າບໍລິການວິຊາການ ສາມາດນຳໃຊ້ໄດ້ພາຍໃຕ້ເງື່ອນໄຂດັ່ງນີ້:

- ຫົວໜ່ວຍງົບປະມານທີ່ມີລາຍຮັບຄ່າບໍລິການທາງດ້ານວິຊາການ ຕ້ອງສ້າງແຜນລາຍຮັບງົບປະມານປະຈໍາປີຂອງຕົນຕາມຂັ້ນຕອນ ແລະ ລະບຽບການທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ;

- ຫົວໜ່ວຍງົບປະມານວິຊາການ ຕ້ອງເປີດບັນຊີຢູ່ຄັງເງິນແຫ່ງຊາດ ເພື່ອຄຸ້ມຄອງ ແລະ ຕິດຕາມລາຍຈ່າຍຕ່າງໆໃຫ້ຖືກຕ້ອງຕາມສາລະບານງົບປະມານ ແລະ ແຜນງົບປະມານປະຈໍາປີ, ບໍ່ອະນຸຍາດໃຫ້ຫົວໜ່ວຍງົບປະມານທຸກຂັ້ນທີ່ມີລາຍຮັບຄ່າບໍລິການທາງດ້ານວິຊາການ ເປີດບັນຊີເງິນຝາກສະເພາະນອກລະບົບຄັງເງິນແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ສັ່ງການເອກ;

- ລາຍຈ່າຍບໍລິການປົກກະຕິ ທີ່ຮັບໃຊ້ໃຫ້ຫົວໜ່ວຍງົບປະມານທຸກຂັ້ນ ຕ້ອງຂຶ້ນແຜນລາຍຈ່າຍງົບປະມານລະອຽດໂດຍປະຕິບັດຕາມຂັ້ນຕອນ ແລະ ລະບຽບການຂອງການສ້າງແຜນງົບປະມານແຫ່ງລັດ;

- ການອະນຸມັດຈ່າຍຂອງຫົວໜ່ວຍງົບປະມານ ທີ່ມີລາຍຮັບຄ່າບໍລິການທາງດ້ານວິຊາການຈາກຜູ້ສັ່ງການໂດຍການມອບສິດຈາກລັດຖະມົນຕີວ່າການກະຊວງການເງິນ ຕ້ອງໄດ້ຜ່ານການສະຫລຸບ, ໄລ່ລຽງລາຍຮັບ - ລາຍຈ່າຍຢ່າງຖືກຕ້ອງ ຈາກຂະແໜງການເງິນຢ່າງຖືກຕ້ອງ; ໃນກໍລະນີຫາກລາຍຮັບບໍ່ພຽງພໍກັບລາຍຈ່າຍລັດຈະເປັນຜູ້ຊ່ວຍໝູນໃຫ້, ຖ້າຫາກລາຍຮັບຫຼາຍກວ່າລາຍຈ່າຍຕ້ອງໄດ້ມອບຄືນເຂົ້າງົບປະມານແຫ່ງລັດ;

- ຫາກລາຍຮັບຄ່າບໍລິການທາງດ້ານວິຊາການ ປະຕິບັດລື່ນແຜນການປະຈໍາປີແມ່ນມອບ ໃຫ້ຂະແໜງການກ່ຽວຂ້ອງນໍາໃຊ້ທັງໝົດ ຕາມການຕົກລົງເຫັນດີຂອງລັດຖະບານ.

6.4. ອີງຕາມມາດຕາ 107 ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ການສ້າງແຜນ, ການສະຫລຸບ, ຕິດຕາມ ແລະ ກວດກາ.

ໃຫ້ຂະແໜງການຕ່າງໆສ້າງແຜນ, ຈັດຕັ້ງປະຕິບັດ, ສະຫລຸບລາຍງານ, ຕິດຕາມ ແລະ ກວດກາດັ່ງນີ້:

1. ສ້າງແຜນລາຍຮັບກ່ຽວກັບຄ່າທໍານຽມ ແລະ ຄ່າບໍລິການວິຊາການເປັນແຕ່ລະປີ ໂດຍສົ່ງໃຫ້ກະຊວງການເງິນສັງລວມ ແລະ ນໍາສະເໜີຕໍ່ລັດຖະບານ ພິຈາລະນາ ເພື່ອໃຫ້ສະພາແຫ່ງຊາດຮັບຮອງພ້ອມທັງຮັບຜິດຊອບໃນການເກັບລາຍຮັບຄ່າທໍານຽມ ແລະ ຄ່າບໍລິການວິຊາການ ເພື່ອມອບເຂົ້າງົບປະມານແຫ່ງລັດ ແລະ ນໍາສະເໜີແຜນການນໍາໃຊ້ເງິນລາຍຮັບຄ່າບໍລິການວິຊາການ ຕາມການອະນຸມັດຂອງກະຊວງການເງິນ;

2. ຈັດຕັ້ງເກັບ ແລະ ມອບລາຍຮັບຈາກຄ່າທໍານຽມ ແລະ ຄ່າບໍລິການ ເຂົ້າບັນຊີງົບປະມານຢູ່ຄັງເງິນແຫ່ງຊາດ ເປັນແຕ່ລະເດືອນບໍ່ໃຫ້ກາຍວັນທີ 10 ຂອງເດືອນຖັດໄປ ແລະ ສະຫລຸບລາຍງານກ່ຽວກັບການຈັດຕັ້ງປະຕິບັດເປັນແຕ່ລະເດືອນ, ງວດ, ຫົກເດືອນ ແລະ ປີ ແລະ ສົ່ງໃຫ້ກະຊວງການເງິນບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ;

3. ຕິດຕາມ ແລະ ກວດກາລາຍຮັບຄ່າທຳນຽມ ແລະ ຄ່າບໍລິການວິຊາການຂອງຂະແໜງການທີ່ດິນ ໂດຍປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ;

4. ໃນກໍລະນີທີ່ເຫັນວ່າອັດຕາຄ່າທຳນຽມ ແລະ ຄ່າບໍລິການວິຊາການບໍ່ທັນສອດຄ່ອງກັບສະພາບການຕົວຈິງ, ຄົ້ນຄວ້າ ແລະ ນຳສະເໜີຕໍ່ກະຊວງການເງິນ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ.

## 7. ການຈັດຕັ້ງປະຕິບັດ ແລະຜົນສັກສິດ

ມອບໃຫ້ຫ້ອງການ, ບັນດາກົມ, ສູນ, ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນຫລວງວຽງຈັນ, ອົງການຄຸ້ມຄອງທີ່ດິນ ປະຈຳເມືອງ, ເທດສະບານ ແລະ ໜ່ວຍງານທີ່ດິນປະຈຳບ້ານ ແລະພາກ ສ່ວນທີ່ກ່ຽວຂ້ອງເປັນ ຜູ້ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ແລະ ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ຢ່າງເຂັ້ມງວດ.

ຂໍ້ຕົກລົງຊົ່ວຄາວ ຂອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການຄຸ້ມຄອງທີ່ດິນ ແຫ່ງຊາດວ່າດ້ວຍຄ່າທຳນຽມກັບທີ່ດິນ ສະບັບເລກທີ 498/ສນຍ.ອຄດຊ, ລົງວັນທີ 09 ພຶດສະພາ 2008 ແລະ ຂໍ້ຕົກລົງຊົ່ວຄາວຂອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການຄຸ້ມຄອງທີ່ດິນແຫ່ງຊາດ ວ່າດ້ວຍອັດຕາຄ່າບໍລິການກ່ຽວກັບທີ່ດິນ ສະບັບເລກທີ 499/ສນຍ.ອຄດຊ, ລົງວັນທີ 09 ພຶດສະພາ 2008 ແມ່ນ ໃຫ້ຍົກເລີກການນຳໃຊ້.

ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ບັນດາຂໍ້ກຳນົດບົດບັນຍັດໃດທີ່ອອກ ໃນເມື່ອກ່ອນຫາກຂັດກັບຄຳແນະນຳສະບັບນີ້ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ,
ຫົວໜ້າອົງການຄຸ້ມຄອງທີ່ດິນແຫ່ງຊາດ

ສຳນັກງານນາຍົກລັດຖະມົນຕີ ອົງການຄຸ້ມຄອງທີ່ດິນແຫ່ງຊາດ

**ດ່າອ້ວນ ບຸບຕາ**